**Curriculum on Basic Skills in legal profession**
**for enforcement and court judgement (Laos)**

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

# Lecture 9
# Understanding on Ethical knowlegde
# ຄວາມຮັບຮູ້ກ່ຽວກັບຈັນຍາບັນ

## 1. ຄວາມໝາຍຂອງຈັນຍາບັນ

ຈັນຍາບັນ ເປັນຄຳສັບທີ່ແປມາຈາກພາສາກັງກິດ ຈາກຄຳວ່າ Ethics ຊຶ່ງໃນທາງປັດຊະຍານັ້ນ Ethics ໝາຍເຖິງ ຈະຣິຍະສາດ ໂດຍຈະຣິຍະສາດນັ້ນແມ່ນສາຂາໜຶ່ງຂອງປັດຊະຍາ ຊຶ່ງຈາຣິຍະສາດແມ່ນສາດ, ວິຊາວ່າດ້ວຍຈາຣິຍາທຳ ຄືສຶກສາກ່ຽວກັບຄວາມດີ, ຄວາມຊົ່ວແມ່ນຫຍັງ, ມີຈິງ ຫຼື ບໍ່[1] ເມື່ອສັງຄົມລາວຮັບເອົາຄຳວ່າ Ethics ມາໃຊ້ ຈຶ່ງຈຳເປັນຕ້ອງມີການແປ ແລະ ໃຫ້ຄວາມໝາຍ ຊຶ່ງໃນພາສາລາວແຕ່ກ່ອນເພິ່ນຂຽນວ່າ "ຈຣິຍທັມ" ຜ່ານວິວັດທະນາການທາງດ້ານພາສາຈົນຮອດປັດຈຸບັນເພິ່ນຈຶ່ງນຳມາຂຽນໂດຍງ່າຍໆຄື "ຈັນຍາທຳ[2]" ຄຳວ່າ "ຈັນຍາ" ໝາຍເຖິງຄວາມປະພຶດ ຫຼື ກິລິຍາທີ່ຄວນປະພຶດ, ສ່ວນ "ທຳ" ໝາຍເຖິງຄຸນງາມຄວາມດີ, ຄວາມຍຸຕິທຳ, ຄວາມຖືກຕ້ອງ ຫຼື ກົດເກນ ໃນເມື່ອເອົາສອງຄຳມາລວມເຂົ້າກັນແລ້ວ ຈຶ່ງໄດ້ຄຳວ່າ: "ຈັນຍາທຳ" ຊຶ່ງແມ່ນຄວາມປະພຶດ ຫຼື ກິລິຍາທີ່ຄວນປະຕິບັດໂດຍໃຫ້ມີຄວາມຍຸຕິທຳ, ຖືກຕ້ອງຕາມຫຼັກການ ຫຼືເວົ້າໄດ້ອີກຢ່າງໜຶ່ງວ່າ: ຈັນຍາທຳ ແມ່ນຄວາມດີງາມ, ຄວາມຍຸຕິທຳ ແລະ ຄວາມຖືກຕ້ອງຕາມຫຼັກການທີ່ຕ້ອງປະຕິບັດ, ຊຶ່ງຕໍ່ມາໄດ້ມີການປັບປຸງເອກະສານເພື່ອໃຊ້ເຂົ້າໃນສື່ການຮຽນ-ການສອນວິຊາຊີບຍຸຕິທຳຂະແໜງຕ່າງໆ ແລະ ໄດ້ມີການຕົກລົງປ່ຽນຈາກຄຳວ່າ ຈັນຍາທຳມາເປັນຈັນຍາບັນ[3].

ຈາກຄວາມໝາຍດັ່ງກ່າວ ເຫັນໄດ້ວ່າຈັນຍາບັນຈະເນັ້ນໄປໃນເລື່ອງການປະຕິບັດ, ການປະພຶດຕໍ່ກັນຂອງກຸ່ມຄົນໃນສັງຄົມທີ່ສະແດງອອກມາ ຊຶ່ງເນັ້ນດ້ານການປະພຶດທີ່ສະແດງອອກພາຍນອກແບບທົ່ວໆ ໄປຂອງຄົນ ເຊັ່ນ ພຶດຕິກຳການຊ່ວຍເຫຼືອເອື້ອເຟື້ອແກ່ກັນ, ການວາງຕົວຕໍ່ກັນ ຊຶ່ງໃນປະເທດຕ່າງໆ ກໍຖືວ່າຄວນປະຕິບັດຕໍ່ກັນແບບນັ້ນ ຫຼື ຖືກັນວ່າເປັນເລື່ອງທີ່ຄວນປະພຶດ, ປະຕິບັດຕໍ່ກັນໃຫ້ເປັນສາກົນ ກາຍເປັນເພີ່ມຄຳໃໝ່ເຂົ້າມາອີກວ່າເປັນຈັນຍາບັນສາກົນໂດຍພະຍາຍາມອະທິບາຍວ່າທຸກແຫ່ງ, ທຸກປະເທດກໍຄວນປະພຶດຕໍ່ກັນໃນລັກສະນະນັ້ນ.

ຕໍ່ມາເມື່ອເຫັນວ່າພຶດຕິກຳທີ່ສະແດງອອກມາພາຍນອກເປັນເລື່ອງຂອງຈັນຍາບັນ ແຕ່ໃນທາງຈິດໃຈທີ່ເປັນສະພາບພາຍໃນຈະເປັນແນວໃດນັ້ນ ຈຶ່ງເກີດຄຳວ່າ ຄຸນນະທຳ (Virtue) ຂຶ້ນມາຄຽງຄູ່ກັບຈັນຍາບັນ ໂດຍຖືວ່າຄຸນນະທຳເປັນຄວາມດີພາຍໃນຈິດໃຈ ໃຊ້ເປັນຄຳນິຍາມຄຽງຄູ່ກັບຈັນຍາບັນ ຊຶ່ງຄຸນນະທຳ (Virtue) ເມື່ອສະແດງອອກສູ່

---

[1] ຄຳອະທິບາຍຫຼັກວິຊາຊີບນັກກົດໝາຍ, ຮຈ. ດິເຣກ ຄວນສະມາຄົມ, ຄະນະນິຕິສາດ ມະຫາວິທະຍາໄລພະຍັບ ຣາຊະອານາຈັກໄທ, ປີ 2014, ໜ້າ 154

[2] ທ່ານ ແສງພະຈັນ ວົງໂພທອງ, ປຶ້ມແບບຮຽນຫຼັກສູດຝຶກອົບຮົມວິຊາຊີບຍຸຕິທຳ ວິຊາຈັນຍາທຳຂອງວິຊາຊີບຍຸຕິທຳ, ສະຖາບັນຍຸຕິທຳແຫ່ງຊາດ, ປີ 2016, ໜ້າ 1

[3] ກອງປະຊຸມສ້າງ 3 ຫຼັກສູດກໍ່ສ້າງ ແລະ 3 ຫຼັກສູດຝຶກອົບຮົມຂອງສະຖາບັນຍຸຕິທຳແຫ່ງຊາດ, ສະໜັບສະໜູນໂດຍໂຄງການຊ່ວຍໜູນສະຖາບັນຍຸຕິທຳລາວ, ປີ 2019.

ການປະຕິບັດເປັນຈັນຍາບັນ, ຈັນຍາບັນຕ້ອງມີຄຸນນະທຳເປັນຖານ ຊຶ່ງຄຸນນະທຳ ໝາຍເຖິງ ສະພາບຄຸນງາມຄວາມດີ ໃນດ້ານການປະພຶດ ແລະ ຈິດໃຈ ຊຶ່ງສາມມາດແຍກອອກເປັນສອງຄວາມໝາຍຄື:

- ການປະພຶດດີ ເພື່ອປະໂຫຍດຂອງຕົນ ແລະ ສັງຄົມ ຊຶ່ງມີພື້ນຖານມາຈາກຫຼັກສິນທຳທາງສາສະໜາ, ຄ່ານິຍົມທາງວັດຖະນາທຳ, ປະເພນີ, ຫຼັກກົດໝາຍ ແລະ ຈັນຍາບັນວິຊາຊີບ.

- ການຮູ້ຈັກຄິດໄຕຕອງວ່າອັນໃດຄວນ ຫຼື ບໍ່ຄວນເຮັດ ແລະ ອາດເວົ້າໄດ້ວ່າ ຄຸນນະທຳຄື: ຈຣິຍທັມ ແຕ່ລະຂໍ້ທີ່ນຳມາປະຕິບັດຈົນເປັນນິໄສ ເຊັ່ນ: ເປັນຄົນຊື່ສັດ, ເສຍສະຫຼະ, ອົດທົນ, ມີຄວາມຮັບຜິດຊອບ ແລະອື່ນໆ.

ເຖິງຢ່າງໃດກໍຕາມ ເມື່ອພິຈາລະນາປຽບທຽບ ຈັນຍາບັນ ກັບຄຳວ່າ ສິນທຳ ໃນສັງຄົມລາວຈະເປັນແນວໃດນັ້ນ ພັດມີການໃຫ້ຄວາມໝາຍຂອງສິນທຳໄປໃນແບບທີ່ວ່າ ສິນທຳເປັນຫຼັກການປະພຶດທີ່ມາຈາກສາສະໜາ ເພາະສັງຄົມລາວນັບຖືສາສະໜາພຸດ. ດັ່ງນັ້ນ, ຫຼັກການປະຕິບັດທີ່ມາຈາກສາສະໜາທີ່ເປັນເລື່ອງຂອງສິນທຳ ຈຶ່ງເປັນການໃຫ້ຄວາມໝາຍທີ່ແຍກກັນລະຫວ່າງຈັນຍາບັນກັບສິນທຳ ວ່າສິນທຳເປັນຫຼັກການປະພຶດທີ່ມາຈາກຫຼັກການປະພຶດທີ່ມາຈາກພຸດທະສາສະໜາເປັນສິນທຳ ບໍ່ເປັນຈັນຍາບັນ ເພາະຈັນຍາບັນເປັນຫຼັກການປະພຶດທົ່ວໄປ ຫຼື ເປັນແບບແຜນການປະພຶດທົ່ວໆ ໄປ.

ການໃຫ້ຄວາມໝາຍໃນທາງວິຊາການໄລຍະຕໍ່ມາ ຈຶ່ງໄປໃນທາງວ່າ ຈັນຍາບັນມີພື້ນຖານມາຈາກຄຸນນະທຳ (Virtue) ໃນໃຈ ແລ້ວອອກມາເປັນການປະພຶດ ປະຕິບັດໃນສັງຄົມເປັນ Ethics ຈັນຍາບັນ ແຕ່ຖ້າເປັນການປະພຶດທີ່ມາຈາກສາສະໜາກໍເປັນສິນທຳ.

ຈັນຍາບັນ ແມ່ນການປະພຶດທີ່ດີຂອງຄົນເຮົາ ຊຶ່ງສະແດງເຖິງຄວາມຮັກ ແລະ ເຂົ້າລົບວິຊາສະເພາະຂອງຕົນ ຫຼື ອົງການ, ສະຖາບັນບ່ອນທີ່ຕົນເຮັດວຽກ ຫຼື ສັງກັດຢູ່ ເຊັ່ນ: ຢູ່ໃນສັງຄົມ ມັກຈະປາກົດເຫັນເລື້ອຍໆ ວ່າມີຄົນຈຳນວນໜຶ່ງປະພຶດຕົນໄປໃນທາງທີ່ບໍ່ດີ, ລະເມີດລະບຽບກົດໝາຍ, ສະແຫວງຫາຜົນປະໂຫຍດໂດຍບໍ່ຊອບທຳ, ເຮັດໃຫ້ເສຍຊື່ສຽງຂອງຜູ້ກ່ຽວ ແລະ ສະຖາບັນຜູ້ກ່ຽວສັງກັດ, ການກະທຳດັ່ງກ່າວນີ້ເອງທີ່ເອີ້ນວ່າ ຂາດຈັນຍາບັນ ຫຼື ຄົນບໍ່ມີຈັນຍາບັນ.

ຈັນຍາບັນ ເປັນຄຳສັບທີ່ມາຈາກພາສາບາລີ ຊຶ່ງມີຄວາມໝາຍວ່າ ຫຼັກການປະພຶດ ທີ່ອົງການຈັດຕັ້ງວິຊາຊີບຕ່າງໆ ກຳນົດຂຶ້ນ ເພື່ອຮັກສາຊື່ສຽງ, ຖານະ ແລະ ກຽດສັກສີ, ຊຶ່ງອາດຂຽນເປັນລາຍລັກອັກສອນ ຫຼື ບໍ່ກໍໄດ້.

ຈັນຍາບັນວິຊາຊີບປະຕິບັດຄຳຕັດສິນຂອງສານ  ແມ່ນຫຼັກການປະພຶດຂອງພະນັກງານປະຕິບັດຄຳຕັດສິນຂອງສານ ທີ່ສະແດງໃຫ້ເຫັນເຖິງຄວາມຮັກ ແລະ ເຂົ້າລົບວິຊາຊີບປະຕິບັດຄຳຕັດສິນຂອງສານ ເພື່ອຮັກສາ ແລະ ສົ່ງເສີມກຽດສັກສີ, ຊື່ສຽງ ແລະ ຖານະຂອງວິຊາຊີບປະຕິບັດຄຳຕັດສິນຂອງສານ.

ຈັນຍາບັນວິຊາຊີບປະຕິບັດຄຳຕັດສິນຂອງສານ ເປັນຫຼັກເກນທີ່ເວົ້າເຖິງ ການປະຕິບັດໜ້າທີ່ໃນວິຊາຊີບທີ່ດີ ແລະ ການວາງຕົວຢູ່ໃນສັງຄົມທີ່ດີ ຂອງນັກວິຊາຊີບປະຕິບັດຄຳຕັດສິນຂອງສານ. ຊຶ່ງຈັນຍາບັນວິຊາຊີບດັ່ງກ່າວນີ້ ເປັນເລື່ອງທີ່ສຳຄັນທີ່ສຸດເລື່ອງໜຶ່ງທີ່ຕ້ອງຮຽນຮູ້ ແລະ ປະຕິບັດ.

ໃນການປະຕິບັດຄຳຕັດສິນຂອງສານ ຈັນຍາບັນເປັນສິ່ງທີ່ເຮັດໃຫ້ເກີດຄວາມຖືກຕ້ອງ, ເປັນທຳຢູ່ໃນສັງຄົມ, ເຮັດໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານ ສາມາດປະກອບອາຊີບໄດ້ດີທີ່ສຸດ ແລະ ສາມາດຮັກສາກຽດຕິຍົດຂອງວິຊາຊີບໄວ້ໄດ້ອີກດ້ວຍ, ສະຫຼຸບແລ້ວຈັນຍາບັນຂອງວິຊາຊີບປະຕິບັດຄຳຕັດສິນຂອງສານ ມີຄວາມສຳຄັນຢູ່ສອງສ່ວນດ້ວຍກັນ ຄື: ການປະຕິບັດໜ້າທີ່ໃນວິຊາຊີບທີ່ດີ ແລະ ການວາງຕົວຢູ່ໃນສັງຄົມທີ່ດີ ຂອງນັກວິຊາຊີບປະຕິບັດຄຳຕັດສິນຂອງສານ.

2. **ຄວາມສຳຄັນຂອງຈັນຍາບັນ**

ຄຳວ່າ ຈັນຍາບັນ ມີຄວາມສຳຄັນ ແລະ ມີຄວາມໝາຍຢ່າງເລິກເຊິ່ງ ຊຶ່ງສະທ້ອນໃຫ້ເຫັນເຖິງຄວາມຮູ້ສຶກຂອງຄົນເຮົາແບບທຳມະຊາດຕໍ່ການກະທຳ ແລະ ສິ່ງທີ່ຄວນກະທຳຢູ່ໃນສັງຄົມ. ຫຼາຍຄົນຮູ້ວ່າສິ່ງທີ່ຕົນໄດ້ເຮັດ, ຈະເຮັດ, ຄິດວ່າຈະເຮັດ ຫຼື ກະທຳລົງໄປນັ້ນເປັນສິ່ງທີ່ດີ ຫຼື ບໍ່, ແຕ່ບາງຄັ້ງກໍໄດ້ກະທຳໄປດ້ວຍເຈດຕະນາ ຫຼື ດ້ວຍຄວາມບໍ່ລະມັດລະວັງ. ທັງໝົດເຫຼົ່ານີ້ໄດ້ສ່ອງແສງໃຫ້ເຫັນເຖິງຄຸນຄ່າຂອງການປະພຶດຕໍ່ສັງຄົມ ເນື່ອງຈາກການປະພຶດຂອງຄົນເຮົາໃນເວລາທີ່ຕົນມີສະຕິສຳປະຊັນຍະດີຢູ່ນັ້ນ ຍ່ອມຈະສາມາດບັນຊາການກະທຳຂອງຕົນເອງໄດ້. ໂດຍທົ່ວໄປແລ້ວຄົນເຮົາຈະຮູ້ວ່າສິ່ງໃດຜິດກົດໝາຍ ແລະ ສິ່ງໃດທີ່ຄວນກະທຳ. ຫຼັກແຫ່ງຄວາມປະພຶດທີ່ດີ ຫຼື ກອບບັງຄັບໃຫ້ປະຕິບັດໃນສິ່ງທີ່ດີ ແລະ ບໍ່ລະເມີດກົດໝາຍນັ້ນ ກໍໝາຍເຖິງຈັນຍາບັນນັ້ນເອງ ຕ່າງແຕ່ວ່າກົດໝາຍຈະວ່າງຂໍ້ກຳນົດທີ່ມີຜົນບັງຄັບໃຊ້ໂດຍລວມທົ່ວສັງຄົມ, ແຕ່ຈັນຍາບັນຈະສະເພາະເຈາະຈົງເຖິງກຸ່ມຄົນ ແລະ ສາຂາອາຊີບທີ່ກ່ຽວຂ້ອງ[4].

ຈັນຍາບັນກ່ຽວຂ້ອງໂດຍກົງກັບຫຼັກການປະພຶດຂອງຄົນ ຊຶ່ງສ່ອງແສງໃຫ້ເຫັນຄຸນສົມບັດ ແລະ ກິລິຍາມາລະຍາດຂອງຄົນທີ່ສະແດງອອກພາຍນອກຕໍ່ສັງຄົມນັ້ນ ຍ່ອມຈະສົ່ງຜົນກະທົບໂດຍກົງຕໍ່ຕົນເອງ ແລະ ຄອບຄົວ, ສະຖາບັນທີ່ຕົນສັງກັດ ແລະ ສັງຄົມໂດຍລວມ ຊຶ່ງສະແດງໃຫ້ເຫັນວ່າບຸກຄົນນັ້ນມີຈັນຍາບັນຂອງຄວາມເປັນຄົນຜູ້ໜຶ່ງຫຼາຍໜ້ອຍພຽງໃດ.

**1) ຄວາມສຳຄັນຕໍ່ອົງການປະຕິບັດຄຳຕັດສິນຂອງສານ**

ຈັນຍາບັນມີຄວາມສຳຄັນຢ່າງຍິ່ງຕໍ່ອົງການປະຕິບັດຄຳຕັດສິນຂອງສານ ຖ້າພະນັກງານປະຕິບັດຄຳຕັດສິນຂອງສານ ປະພຶດທີ່ດີຕໍ່ອາຊີບຂອງຕົນເອງ ຈະເຮັດໃຫ້ຄູ່ຄວາມ ແລະ ສັງຄົມມີຄວາມເຊື່ອຖືຕໍ່ອົງການປະຕິບັດຄຳຕັດສິນຂອງສານ, ຫຼີກລ້ຽງຫາງສຽງຈາກສັງຄົມໄປໃນທາງທີ່ບໍ່ດີ ເຮັດໃຫ້ການປະຕິບັດຄຳຕັດສິນຂອງສານຖືກຕ້ອງຕາມກົດໝາຍ ແລະ ຍຸຕິທຳ. ກົງກັນຂ້າມ ຖ້າພະນັກງານປະຕິບັດຄຳຕັດສິນຂອງສານ ຫາກຂາດຈັນຍາບັນ ເຊັ່ນ: ປະຕິບັດໜ້າທີ່ບໍ່ຖືກຕ້ອງຕາມກົດໝາຍ ເປັນຕົ້ນວ່າ ກົດໜ່ວງຖ່ວງດຶງ, ແກ່ຍາວເວລາການປະຕິບັດຄຳຕັດສິນຂອງສານ ຫຼື ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ກໍຍ່ອມສົ່ງຜົນສະທ້ອນທາງລົບຕໍ່ອົງການປະຕິບັດຄຳຕັດສິນຂອງສານ.

**2) ຄວາມສຳຄັນຂອງຈັນຍາບັນຕໍ່ສັງຄົມ**

ຈັນຍາບັນນອກຈາກຈະເຮັດໃຫ້ຕົນເອງດີ ແລະ ສະຖາບັນມີຊື່ສຽງແລ້ວ ກໍຈະເຮັດໃຫ້ສັງຄົມມີຄວາມສີວິໄລ ແລະ ຍຸຕິທຳ ດັ່ງຄຳສຸພາສິດເວົ້າວ່າ: "ຫຼາຍຄົນດີ ຫຼາຍຜີແກມໄກ່ ຫຼາຍໄມ້ໃຫຍ່ປຸກເຮືອນງາມ" ກໍແມ່ນຄະຕິອັນໜຶ່ງທີ່ສະທ້ອນໃຫ້ເຮົາເຫັນເຖິງບັນຫາລວມຂອງສັງຄົມ, ຫຼາຍຄົນດີໝາຍເຖິງການມີຄວາມສາມັກຄີກັນ, ຫຼາຍຄົນເຮັດຫຼາຍຄົນສ້າງ ບ້ານເມືອງກໍຈະເລີນສີວິໄລ. ເພາະຄົນແມ່ນແຮງງານຕົ້ນຕໍຂອງສັງຄົມ ແມ່ນກຳລັງການຜະລິດ. ເພາະສະນັ້ນ, ຈຶ່ງເວົ້າໄດ້ວ່າ ຄົນແມ່ນປັດໃຈຕົ້ນຕໍໃນການຕັດສິນໂຊກສະຕາຂອງປະເທດຊາດ ແລະ ສັງຄົມ. ປະເທດຊາດຈະມັ່ງຄັ່ງເຂັ້ມແຂງ, ປະຊາຊົນຈະຮັ່ງມີຜາສຸກກໍຍ້ອນຄົນໃນຊາດມີຄວາມສາມັກຄີເປັນຜືກແຜ່ນ ແລະ ພ້ອມພຽງຮຽງໜ້າກັນ ໃນການສ້າງສາພັດທະນາ ແລະ ປົກປັກຮັກສາປະເທດຊາດ. ໃນຫຼັກປັດຊະຍາກຳລັງການຜະລິດ ກໍແມ່ນຄົນບວກວັດຖຸບວກເຄື່ອງມືການຜະລິດ.

ສະນັ້ນ, ຈັນຍາບັນຈຶ່ງມີຄວາມສຳຄັນ ເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ການພັດທະນາເສດຖະກິດ-ສັງຄົມມີຄວາມສະດວກ, ວ່ອງໄວ, ສີວິໄລ ແລະ ຍຸຕິທຳ.

**3) ຄວາມສຳຄັນຂອງຈັນຍາບັນຕໍ່ຕົນເອງ ແລະ ຄອບຄົວ**

---

[4] ຣສ. ວຽງວິໄລ ທ່ຽງຈັນໄຊ, ຈັນຍບັນຂອງນັກກົດໝາຍ, ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດລາວ, ປີ 2015, ໜ້າ 5

ການພັດທະນາຕົນເອງ ໃນຖານະທີ່ເປັນສະມາຊິກຂອງສັງຄົມເວົ້າລວມ, ເວົ້າສະເພາະຕໍ່ຄອບຄົວ ມີຄວາມສຳຄັນຢ່າງຍິ່ງ, ຖ້າຄົນສ່ວນຫຼາຍໃນຄອບຄົວດີສັງຄົມນັ້ນຍ່ອມຈະດີ ແລະ ມີຄວາມສີວິໄລ.

"ມາກ" ກ່າວວ່າ ຄອບຄົວແມ່ນຈຸລັງໜຶ່ງຂອງສັງຄົມ, ຄົນຈະບໍ່ສາມາດຢູ່ຢ່າງໂດດດ່ຽວ ແລະ ເກີດຂຶ້ນມາເອງຕາມທຳມະຊາດໄດ້, ຄົນເຮົາຕ້ອງມີຕົ້ນກຳເນີດມາຈາກຄອບຄົວ, ວົງຕະກຸນ ມີກົກເຄົ້າເຫຼົ່າກໍ ຊຶ່ງບັນຫາທັ້ງ ໝົດນີ້ລ້ວນແຕ່ຕິດພັນກັບຈັນຍາບັນທີ່ສ່ອງແສງໃຫ້ເຫັນວິຖີຊີວິດຂອງຄົນໃນສັງຄົມ, ຄວາມມີວັດທະນາທຳ ແລະ ຄວາມຈະເລີນທາງດ້ານຈິດໃຈນ້ອຍຫຼາຍປານໃດ[5].

ສະນັ້ນ, ຈັນຍາບັນຈຶ່ງມີຄວາມສຳຄັນຫຼາຍຕໍ່ຕົນເອງ ແລະ ຄອບຄົວ ເນື່ອງຈາກວ່າ ຖ້າຕົນເອງ ແລະ ຄອບຄອບຄົວມີການປະພຶດທີ່ດີ ກໍຈະນຳມາຊຶ່ງຊື່ສຽງ, ກຽດສັກສີ, ມີຄວາມສາມັກຄີ, ເຮັດໃຫ້ສັງຄົມມີຄວາມເຊື່ອຖືຕົນເອງ ແລະ ຄອບຄົວ, ນອກຈາກນັ້ນ ຍັງເປັນການເຮັດໃຫ້ຕົນເອງ ແລະ ຄອບຄົວມີການພັດທະນາໄປໃນທາງທີ່ຖືກຕ້ອງ ໂດຍສະເພາະແມ່ນປະພຶດປະຕິບັດຖືກຕ້ອງຕາມລະບຽບກົດໝາຍ.

## 3. ແຫຼ່ງທີ່ມາຂອງຈັນຍາບັນ ຢູ່ ສປປ ລາວ

### 1) ຮີດຄອງປະເພນີ-ວັດທະນາທຳ

ການຢູ່ຮ່ວມກັນໃນສັງຄົມກໍບໍ່ອາດຈະປາສະຈາກໄດ້ກົດ ຫຼື ຂໍ້ບັງຄັບທີ່ຕ້ອງເຮັດໃຫ້ກຸ່ມຄົນດັ່ງກ່າວດຳລົງຄົງຕົວຮ່ວມກັນໄດ້ ຊຶ່ງການກະທຳເຫຼົ່ານັ້ນໄດ້ປະຕິບັດສືບຕໍ່ກັນມາເລື້ອຍໆ ຈົນກາຍມາເປັນຮີດຄອງປະເພນີ ຕົວຢ່າງເຊັ່ນພວກເຮົາ (ຊາວລາວ) ແຕ່ດຶກດຳບັນຈົນມາເຖິງປັດຈຸບັນກໍໄດ້ສືບຕໍ່ປະຕິບັດຮີດສິບສອງ, ຄອງສິບສີ່ຮີດຍີ່, ຄອງຈຽງ ແລະ ອື່ນໆ.

ໃນດ້ານວັດທະນາທຳ ກໍມີຄວາມສຳຄັນຫຼາຍຕໍ່ສັງຄົມໜຶ່ງໆ ຫຼື ຊາດໜຶ່ງ ແລະ ມີອິດທິພົນຕໍ່ການດຳລົງຊີວິດຂອງຄົນໃນສັງຄົມ ດັ່ງຄຳເວົ້າທີ່ວ່າ "ວັດທະນາທຳບອກຊາດ ມາລະຍາດບອກຕະກຸນ" ດັ່ງນີ້ເປັນຕົ້ນ.

### 2) ຄຳສອນຂອງສາສະໜາ

ສາສະໜາມີບົດບາດ ແລະ  ອິດທິພົນຕໍ່ເຮົາ ກາກມາກໄດ້ໃຫ້ທັດສະນະຕໍ່ກັບສາສະໜາວ່າ "ສາສະໜາຄືຢາຝິ່ນຂອງປະຊາຊົນ" ນັ້ນແມ່ນສັດຈະທຳ ເນື່ອງຈາດຊາວລາວສ່ວນຫຼາຍຖືສາສະໜາພຸດ, ສະນັ້ນ ຈຶ່ງສະແດງອອກຢູ່ສິນຫ້າ ຊຶ່ງເປັນພື້ນຖານແຫ່ງສິນລະທຳທີ່ພຸດທະສາດສະນິກກະຊົນຕ້ອງໄດ້ເຄົາລົບ. ນອກຈາກພຸດທະສາສະໜາແລ້ວ ສາສະໜາອື່ນກໍມີເປົ້າໝາຍ ອົບຮົມສັ່ງສອນໃຫ້ຄົນເປັນຄົນດີ ແຕ່ວິທີຖ່າຍທອດ ຫຼື ອົບຮົມບົ່ມສອນຂອງສາສະໜາ ກໍມີຫຼາກຫຼາຍວິທີ ທີ່ແຕກຕ່າງກັນອອກໄປ ແຕ່ບໍ່ໝາຍຄວາມວ່າສາສະໜາອື່ນຈະບໍ່ມີຫຼັກຄຳສອນໄປໃນທາງທີ່ດີ, ການທີ່ສອນໃຫ້ຄົນມີຄວາມເມດຕາກະລຸນາ ແລະ ສິນທຳປະຈຳໃຈນັ້ນກໍເປັນປັດໃຈໜຶ່ງທີ່ນອນຢູ່ໃນຈັນຍາບັນ.

ນອກຈາກນີ້ ລະບຽບກົດໝາຍ ກໍຍິ່ງມີລັກສະນະຊັດເຈນຂຶ້ນ ຊຶ່ງການວາງລະບຽບການກໍແມ່ນເພື່ອໃຫ້ຄົນໄດ້ປະຕິບັດ, ການວາງກອບໃຫ້ຄົນປະຕິບັດສິ່ງໃດສິ່ງໜຶ່ງ ຫຼື ຫ້າມກະທຳສິ່ງໃດໜຶ່ງກໍໝາຍເຖິງຫຼັກເກນແຫ່ງຄວາມປະພຶດ.

ວິຊາຊີບກໍເປັນແຫຼ່ງທີ່ມາໜຶ່ງ ຊຶ່ງໃນສັງຄົມເຮົາມີການປະກອບອາຊີບຢູ່ຫຼາຍປະເພດ, ການປະກອບອາຊີບຈະມີລັກສະນະແຕກຕ່າງກັນໄປ ທັງນີ້ແມ່ນອີງຕາມຈຸດພິເສດຂອງໜ້າວຽກ ແລະ ບຸກຄະລາກອນ, ຊັບພະຍາ ກອນມະນຸດທີ່ຢູ່ໃນແຕ່ລະສາຂາວິຊາຊີບນັ້ນ ກໍລ້ວນແຕ່ມີໜ້າທີ່ ແລະ ຄວາມຮັບຜິດຊອບຕໍ່ສັງຄົມທີ່ແຕກຕ່າງກັນອອກໄປ ຄວາມຫຼາກຫຼາຍທາງວິຊາຊີບນີ້ ຍິ່ງຈະເພີ່ມໃຫ້ສັງຄົມມີການເຄື່ອນໄຫວຢ່າງຕັ້ງໜ້າ ແລະ ມີຄວາມຮັບຜິດຊອບຕາມແຕ່ລະຂົງເຂດວຽກງານ. ນອກຈາກແຫຼ່ງທີ່ມາທີ່ໄດ້ກ່າວມານັ້ນແລ້ວ ກໍອາດມີແຫຼ່ງອື່ນ ໂດຍອີງຕາມຈຸດພິເສດທ້ອງຖິ່ນ, ຊົນເຜົ່າ ແລະ ຄວາມເຊື່ອຖື ດັ່ງນີ້ເປັນຕົ້ນ.

## 4. ຈັນຍາບັນທີ່ຕ້ອງປະຕິບັດເປັນອັນລວມ

---

ຣສ. ວຽງວິໄລ ທ່ຽງຈັນໄຊ, ຈັນຍບັນຂອງນັກກົດໝາຍ, ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດລາວ, ປີ 2015, ໜ້າ 5.

ໂດຍອີງໃສ່ຄຳແນະນຳ ຂອງລັດຖະມົນຕີກະຊວງຍຸຕິທຳ ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບ ໃນການຄຸ້ມຄອງ ແລະ ການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 445/ກຍ, ລົງວັນທີ 05 ເມສາ 2019, ຂໍ້ II(3) ວັກໜຶ່ງ "ພະນັກງານປະຕິບັດຄຳຕັດສິນຂອງສານແມ່ນບຸກຄົນດັ່ງນີ້", ຂີດໜ້າໜຶ່ງ "ເປັນລັດຖະກອນ".

ດັ່ງນັ້ນ ຈັນຍາບັນຂອງພະນັກງານປະຕິບັດຄຳຕັດສິນຂອງສານທີ່ເປັນອັນລວມຈຶ່ງຕ້ອງປະຕິບັດຕາມ ດຳລັດວ່າດ້ວຍ ຈັນຍາບັນຂອງພະນັກງານ-ລັດຖະກອນ ສະບັບເລກທີ 184/ລບ ລົງວັນທີ 26 ມິຖຸນາ 2019, ຊຶ່ງມີຫຼັກການພື້ນຖານດັ່ງນີ້[6]:

-ເຄົາລົບ, ປະຕິບັດໜ້າທີ່ ຕາມແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ລະບຽບການຂອງລັດດ້ວຍຄວາມຈົງຮັກພັກດີ ແລະ ສັດຊື່;

-ຍົກສູງສະຕິຊາດ ໂດຍຖືເອົາຜົນປະໂຫຍດລວມຂອງຊາດ, ປະຊາຊົນ, ສັງຄົມ ແລະ ການຈັດຕັ້ງສູງກວ່າຜົນປະໂຫຍດສ່ວນຕົວ;

- ປະພຶດ ແລະ ປະຕິບັດຕົນ ຢ່າງຖືກຕ້ອງໃນທຸກເວລາ ແລະ ສະຖານທີ່;

-ຮັບປະກັນຄວາມສະເໝີພາບ ລະຫວ່າງ ເພດ ແລະ ເຜົ່າ ຂອງພະນັກງານ-ລັດຖະກອນ.

ຈັນຍາບັນຂອງພະນັກງານ-ລັດຖະກອນ ປະກອບມີ ສີ່ ປະເພດ ດັ່ງນີ້:

- ຈັນຍາບັນຕໍ່ຕົນເອງ
- ຈັນຍາບັນຕໍ່ວິຊາຊີບ
- ຈັນຍາບັນຕໍ່ການຈັດຕັ້ງ
- ຈັນຍາບັນຕໍ່ປະຊາຊົນ ແລະ ສັງຄົມ

**+ ຈັນຍາບັນຕໍ່ຕົນເອງ**

ພະນັກງານ-ລັດຖະກອນ ຕ້ອງຝຶກຝົນຫຼໍ່ຫຼອມຕົນເອງ ໃຫ້ກາຍເປັນພະນັກງານທີ່ດີ ດັ່ງນີ້:

1)ມີຄຸນທາດການເມືອງໜັກແໜ້ນ, ຈົງຮັກພັກດີຕໍ່ອຸດົມການສັງຄົມນິຍົມ, ເປັນເອກະພາບສູງຕໍ່ແນວທາງນະໂຍບາຍຂອງພັກ, ລັດຖະທຳມະໜູນ ແລະ ກົດໝາຍຂອງລັດ, ມີຫຼັກໝັ້ນມິດ-ສັດຕູຈະແຈ້ງ, ບໍ່ ຫວັ່ນໄຫວຄອນແຄນຕໍ່ສະພາບການຕ່າງໆ ທີ່ເກີດຂຶ້ນຢູ່ພາຍໃນ ແລະ ຕ່າງປະເທດ, ມີຄວາມບໍລິສຸດ ແລະ ນ້ຳໃຈເສຍສະຫຼະສູງ ຕໍ່ປະເທດຊາດ ແລະ ປະຊາຊົນ

2)ຄຸນສົມບັດສິນທຳປະຕິວັດ, ສັດຊື່ບໍລິສຸດຕໍ່ການຈັດຕັ້ງ, ຕໍ່ເພື່ອນຮ່ວມງານ, ຕໍ່ຄອບຄົວ, ສາມັກຄີຮັກແພງ, ຈິງໃຈຕໍ່ກັນ ແລະ ມີຄວາມຜູກພັນຢ່າງສະນິດແໜ້ນກັບມະຫາຊົນ ແລະ ປະຊາຊົນບັນດາເຜົ່າ, ເຄົາລົບສິດເປັນເຈົ້າຂອງປະຊາຊົນ, ມີແບບແຜນການດຳລົງຊີວິດທີ່ຖືກຕ້ອງ, ລຽບງ່າຍ, ຮັບຜິດຊອບໃນໜ້າທີ່ວຽກງານຂອງຕົນ, ປະຕິບັດຕົນກົງຕໍ່ເວລາ ແລະ ດຸໝັ່ນຮ່ຳຮຽນສະແຫວງຫາສິ່ງໃໝ່ໆ ອັນທີ່ກ້າວໜ້າ.

**+ ຈັນຍາບັນຕໍ່ວິຊາຊີບ**

ພະນັກງານ-ລັດຖະກອນ ຕ້ອງເຄື່ອນໄຫວວິຊາຊີບຂອງຕົນ ດ້ວຍຄວາມສັດຊື່ ແລະ ບໍ່ສະແຫວ່ງຫາຜົນປະໂຫຍດໃນທາງທີ່ບໍ່ຖືກຕ້ອງ ແລະ ປະຕິບັດຈັນຍາບັນຂອງຕົນ ຢ່າງເຂັ້ມງວດ ດັ່ງນີ້:

1)ປະຕິບັດໜ້າທີ່ວຽກງານຕາມແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ;

---

[6] ດຳລັດວ່າດ້ວຍ ຈັນຍາບັນຂອງພະນັກງານ-ລັດຖະກອນ, ສະບັບເລກທີ 184/ລບ ລົງວັນທີ 28 ມິຖຸນາ 2019, ມາດຕາ 3.

2) ປະຕິບັດຕາມຫຼັກການວິທະຍາສາດ ຂອງວິຊາຊີບ, ປະຕິບັດຕາມຕໍາແໜ່ງງານ ແລະ ຄວາມຮັບຜິດຊອບຂອງຕົນ;

3) ເສີມຂະຫຍາຍ ແລະ ພັດທະນາຄວາມຮູ້, ຄວາມສາມາດ, ປະສົບການໃນດ້ານວິຊາຊີບທີ່ຕົນຮັບຜິດຊອບ ໃຫ້ມີຄວາມກ້າວໜ້າ ແລະ ກາຍເປັນມືອາຊີບ;

4) ຄົ້ນຄວ້າ, ວິເຄາະ, ວິໄຈ ແລະ ຕັດສິນບັນຫາ ຢ່າງຖືກຕ້ອງຕາມກົດໝາຍ, ລະບຽບການ ແລະ ຫຼັກການ, ຍຶດໝັ້ນຜົນປະໂຫຍດສ່ວນລວມຂອງຊາດ ແລະ ຂອງປະຊາຊົນ ຢ່າງມີຄຸນນະທໍາ ແລະ ຍຸຕິທໍາ;

5) ປະຕິບັດກິດຈໍາກໍາທີ່ກ່ຽວຂ້ອງກັບວິຊາຊີບຂອງຕົນ ເພື່ອສ້າງຄວາມເຊື່ອຖື, ສະໜັບສະໜູນ ແລະ ຄວາມສາມັກຄີພາຍໃນການຈັດຕັ້ງ;

6) ສ້າງຄວາມເຊື່ອໝັ້ນ ດ້ວຍຄວາມໂປ່ງໃສ, ສັດຊື່ ແລະ ບໍລິສຸດໃຈ ໃນການພັດທະນາວິຊາຊີບ[7].

**+ ຈັນຍາບັນຕໍ່ການຈັດຕັ້ງ**

ພະນັກງານ-ລັດຖະກອນ ຕ້ອງເຄົາລົບ ແລະ ມີສະຕິຕໍ່ການຈັດຕັ້ງ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍ, ຮັກສາຄວາມລັບ ແລະ ປະຕິບັດລະບຽບວິໄນ ຂອງການຈັດຕັ້ງຢ່າງເຂັ້ມງວດ ດັ່ງນີ້:

1) ປະພຶດ ແລະ ເຄື່ອນໄຫວຕາມພາລະບົດບາດ, ສິດ, ໜ້າທີ່ໃນຂອບເຂດການຕັດຕັ້ງຂອງຕົນ ດ້ວຍຄວາມສຸດຈະລິດ, ສະເໝີພາບ ແລະ ປາສະຈາກອະຄະຕິ;

2) ປະຕິບັດໜ້າທີ່ວຽກງານຢ່າງມີຫົວຄິດປະດິດສ້າງ, ທຸ້ມເທເຫື່ອແຮງ ແລະ ສະຕິປັນຍາ ຂອງຕົນສຸດຄວາມສາມາດ, ຮອບຄອບ, ວ່ອງໄວ, ປອດໃສ, ຖືກຕ້ອງ, ສົມເຫດສົມຜົນ ເພື່ອປົກປ້ອງກຽດສັກສີຂອງຕົນ ແລະ ການຈັດຕັ້ງ, ຖືເອົາຜົນປະໂຫຍດຂອງຊາດ, ຂອງການຈັດຕັ້ງ ແລະ ປະຊາຊົນເປັນສໍາຄັນ;

3) ໃຊ້ເວລາທາງລັດຖະການ ໃຫ້ເກີດປະໂຫຍດສູງສຸດແກ່ການຈັດຕັ້ງ;

4) ປົກປັກຮັກສາ, ຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ, ລ່ວມໝູ່ໃຫ້ມີປະສິດທິພາບສູງສຸດ;

5) ບໍ່ສວຍໃຊ້ອໍານາດ, ໜ້າທີ່, ຕໍາແໜ່ງ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ, ຄອບຄົວ, ພີ່ນ້ອງ ແລະ ພັກພວກ ຈະແມ່ນທາງກົງ ຫຼື ທາງອ້ອມ;

6) ປະກອບຄວາມຄິດເຫັນຢ່າງມີຫຼັກການ, ລັກສະນະສ້າງສັນ, ຈິງໃຈ ແລະ ມີເຫດຜົນຕາມແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບຂອງລັດ;

7) ໃຫ້ກຽດ ແລະ ເຄົາລົບນັບຖື ຊຶ່ງກັນ ແລະ ກັນ ລະຫວ່າງພະນັກງານປະຕິບັດຄໍາຕັດສິນຂອງສານດ້ວຍກັນ ແລະ ພະນັກງານປະຕິບັດຄໍາຕັດສິນຂອງສານ ຕໍ່ຜູ້ບໍລິຫານ, ຜູ້ບໍລິຫານຕໍ່ພະນັກງານປະຕິບັດຄໍາຕັດສິນຂອງສານ ໂດຍບໍ່ກ້າວກ່າຍ ພາລະບົດບຽດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງກັນ;

8) ປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍ, ເຄົາລົບການຕົກລົງ, ການຕັດສິນໃຈ ແລະ ນັບຖືໃຫ້ກຽດຕໍ່ກັບຜູ້ບໍລິຫານ ແລະ ເພື່ອນຮ່ວມງານ;

9) ມີພາວະຄວາມເປັນຜູ້ນໍາ, ມີຄຸນນະທໍາ, ສັດຊື່, ປະດິດສ້າງ, ສອນ ແລະ ແນະນໍາວຽກງານ, ສົ່ງເສີມຄວາມສາມັກຄີ, ສະໜັບສະໜູນ, ຮັບຟັງ ແລະ ໃຫ້ຄໍາປຶກສາ ແກ່ຜູ້ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;

10) ປະຕິບັດແບບແຜນວິທີການເຮັດວຽກເປັນໝູ່ຄະນະ ເພື່ອເພີ່ມປະສິດທິພາບ ໃນການເຄື່ອນໄຫວວຽກງານຂອງການຈັດຕັ້ງ, ສົ່ງເສີມຜູ້ທີ່ມີຜົນງານ, ຊ່ວຍເຫຼືອເສີມສ້າງຜູ້ທີ່ມີຄວາມຮູ້ ແລະ ຄວາມສາມາດ ໃຫ້ເພື່ອນຮ່ວມງານ[8].

---

[7] ດໍາລັດວ່າດ້ວຍ ຈັນຍາບັນຂອງພະນັກງານ-ລັດຖະກອນ, ສະບັບເລກທີ 184/ລບ ລົງວັນທີ 28 ມິຖຸນາ 2019, ມາດຕາ 7.

[8] ດໍາລັດວ່າດ້ວຍ ຈັນຍາບັນຂອງພະນັກງານ-ລັດຖະກອນ, ສະບັບເລກທີ 184/ລບ ລົງວັນທີ 28 ມິຖຸນາ 2019, ມາດຕາ 8.

**+ ຈັນຍາບັນຕໍ່ປະຊາຊົນ ແລະ ສັງຄົມ**

ພະນັກງານ-ລັດຖະກອນ ຕ້ອງບໍລິການ, ຮັບໃຊ້ປະຊາຊົນ ແລະ ສັງຄົມ ດ້ວຍຄວາມຈິງໃຈ, ສະໝັກພາບ, ໂປ່ງໃສ, ມີກິລິຍາມາລະຍາດດີ, ຖະໜອມຖ່ອມຕົວ, ບໍ່ຮຽກຮ້ອງສິ່ງຕອບແທນ, ບໍ່ສ້າງຄວາມຫຍຸ້ງຍາກໃຫ້ແກ່ປະຊາຊົນ ແລະ ສັງຄົມ ໃນເວລາປະຕິບັດໜ້າທີ່ວຽກງານ ດັ່ງນີ້:

1)ມີຄວາມຍຸຕິທຳ, ມີນ້ຳໃຈເສຍສະຫຼະ, ສຸພາບອ່ອນໂຍນ, ຊີ້ແຈງແນະນຳດ້ວຍເຫດຜົນ ແລະ ຈິງໃຈ;

2)ໃຫ້ການບໍລິການດ້ວຍຄວາມສະເໝີພາບ, ວ່ອງໄວ, ເປັນທຳໂດຍບໍ່ຈຳແນກເພດ, ອາຍຸ, ເຜົ່າ, ຖານະທາງສັງຄົມ, ລະດັບການສຶກສາ ແລະ ຄວາມເຊື່ອຖື;

3)ອຳນວຍຄວາມສະດວກ ແລະ ບໍ່ສ້າງຄວາມຫຍຸ້ງຍາກໃຫ້ແກ່ປະຊາຊົນ ໃນການເຂົ້າເຖິງຂໍ້ມູນຂ່າວສານ ທີ່ສາມາດເປີດເຜີຍໄດ້ ແລະ ຮັກສາຄວາມລັບທາງລັດຖະການ;

4)ຄຸ້ມຄອງ, ປົກປັກຮັກສາຊັບສົມບັດຂອງລັດ, ຂອງລວມໝູ່ ໂດຍຖືເອົາຜົນປະໂຫຍດຂອງຊາດ, ປະຊາຊົນ ແລະ ສັງຄົມເປັນສຳຄັນ;

5)ບໍ່ສວຍໃຊ້ໜ້າທີ່ຕຳແໜ່ງ, ສິດ, ອຳນາດຂົ່ມຂູ່, ຮຽກຮ້ອງສິ່ງຕອບແທນ ແລະ ຮັບຜົນປະໂຫຍດ ຈາກບຸກຄົນ , ນິຕິບຸກຄົນ, ປະຊາຊົນ ແລະ ສັງຄົມ.

**References:**


1. ກົດໝາຍວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 4/ສພຊ, ລົງວັນທີ 25 ກໍລະກົດ 2008;
2. ດຳລັດວ່າດ້ວຍ ຈັນຍາບັນຂອງພະນັກງານ-ລັດຖະກອນ, ສະບັບເລກທີ 184/ລບ ລົງວັນທີ 28 ມິຖຸນາ 2019;
3. ຄຳອະທິບາຍຫຼັກວິຊາຊີບນັກກົດໝາຍ, ຮຈ. ດີເຣກ ຄວນສະມາຄົມ, ຄະນະນິຕິສາດ ມະຫາວິທະຍາໄລພະຍັບ ຣາຊະອານາຈັກໄທ, ປີ 2014;
4. ທ່ານ ແສງພະຈັນ ວົງໂພທອງ, ປື້ມແບບຮຽນຫຼັກສູດຝຶກອົບຮົມວິຊາຊີບຍຸຕິທຳ ວິຊາຈັນຍາທຳຂອງວິຊາຊີບຍຸຕິທຳ, ສະຖາບັນຍຸຕິທຳແຫ່ງຊາດ, ປີ 2016;
5. ຮສ. ວຽງວິໄລ ທ່ຽງຈັນໄຊ, ຈັນຍບັນຂອງນັກກົດໝາຍ, ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດລາວ, ປີ 2015.